ກັນຍາ 2019

**ເນື້ອໃນບົດຂຽນ**

(CONCEPT PAPER)

# ໂຮງໝໍສາກົນ ແລະ ໂຮງຮຽນການແພດ ສຳລັບພາກປະຕິບັດຕົວຈິງ ແລະ ການສຶກສາດ້ານສາທາລະນະສຸກ

(ສະບັບແປເປັນພາສາລາວ)

ສະເໜີໂດຍ

**ມະຫາວິທະຍາໄລນານາຊາດກິງກອກເດຍ**

ສະເໜີໃຫ້

**ພະນະທ່ານ ຣ. ສ. ດຣ. ບຸນກອງ ສີຫາວົງ**

**ລັດຖະມົນຕີກະຊວງສາທາລະນະສຸກ**

**ແຫ່ງ ສ. ປ. ປ. ລາວ**

# OUR UNIVERSITY
## ປະຫວັດຄວາມເປັນມາຂອງມະຫາວິທະຍາໄລ

ມະຫາວິທະຍາໄລນານາຊາດກົງກອກເດຍແມ່ນສະຖາບັນການສຶກສາໜຶ່ງທີ່ອອກໃບຢັ້ງຢືນ, ໃບປະກາດຊະນິຍະບັດ, ໃບປະກາດຊະນິຍະບັດຊັ້ນສູງ ແລະ ມີຫຼັກສູດເຊື່ອມຕໍ່ລະດັບປະລິນຍາຕີ ແລະ ຫຼັງປະລິນຍາຕີທັງພາຍໃນ ແລະ ຕ່າງປະເທດ. ພວກເຮົາມີເຄືອຂ່າຍວິທະຍາໄລຕັ້ງຢູ່ຫຼາຍປະເທດ(ສະຫະລັດອາເມລິກາ, ເອຣົບ, ອິດສະຕາລີ, ການນາດາ, ສ. ເກົາຫຼີ ແລະ ຟີນລິບປິນ) ເຊິ່ງມີຫຼັກສູດຮຽນທາງອິນເຕີເນັດ, ໃນຫ້ອງຮຽນ, ຫຼັກສູດຮຽນທາງໄກ (020) ຜ່ານລະບົບວີດີໂອ. ພວກເຮົາໃຫ້ບໍລິການຫຼັກສູດມະຫາວິທະຍາໄລສໍາລັບນັກຮຽນຜູ້ທີ່ເລືອກໄປຮຽນຕໍ່ມະຫາວິທະຍາໄລ ແລະ ວິທະຍາໄລຕ່າງປະເທດໃນລາຄາທີ່ຖືກ ແລະ ວ່ອງໄວກວ່າໂດຍຜ່ານລະບົບວີດີໂອຫຼັກສູດຮຽນທາງໄກຂອງພວກເຮົາ. ບັນດານັກຮຽນມີທາງເລືອກທີ່ງ່າຍດາຍເຊິ່ງສາມາດໃຊ້ຄອມພິວເຕີ້ເຊື່ອມໂຍງກັບຫຼາກຫຼາຍສາຂາມະຫາວິທະຍາໄລ ແລະ ວິທະຍາໄລເຊັ່ນ: ສິງກະໂປ, ສະວິດເຊີແລນ, ອັງກິດ, ສະຫະລັດອາເມລິກາ ແລະ ປະເທດອື່ນໆຕາມຄວາມຕ້ອງການ.

ມູນລະນິທິກົງກອກເດຍໄດ້ສ້າງຕັ້ງຂຶ້ນໃນປີ 2001, ໄດ້ເຕີບໃຫຍ່ຢ່າງເຂັ້ມແຂງທີ່ມີຊື່ສຽງໂດ່ງດັງພ້ອມກັບມີຜົນງານທີ່ໂດດເດັ່ນດ້ານການສຶກສາ ແລະ ດ້ວຍຈຸດປະສົງຂອງການສະໜອງການສຶກສາທີ່ທັນສະໄໝສອງດ້ານຄື: ງ່າຍໃນການເຂົ້າເຖິງ ແລະ ລາຄາບໍ່ແພງ; ໂດຍການສ້າງລະບົບເຄືອຂ່າຍວິທະຍາໄລ. ມະຫາວິທະຍາໄລກົງກອກເດຍໄດ້ເປີດຕົວໃນວັນທີ 15 ສິງຫາ 2011, ແມ່ນໜຶ່ງໃນບັນດາສະຖາບັນທີ່ເປັນປາຍແຫຼມຂອງມູນນິທິກົງກອກເດຍ. ວິໃສທັດຂອງບັນດາຜູ້ບໍລິຫານຂອງພວກຂ້າພະເຈົ້າ ແລະ ການອຸທິດຂອງເຂົາເຈົ້າເພື່ອປະສົມປະສານການສຶກສາເຂົ້າກັບລະບົບການເຮັດວຽກຂອງເຂົາເຈົ້າໃຫ້ກາຍເປັນຜູ້ນໍາໃນການສ້າງບັນດາມະຫາວິທະຍາໄລໃນຫຼາຍພາກວິຊາທີ່ແຕກຕ່າງກັນໃຫ້ເຕີບໃຫຍ່ເຂັ້ມແຂງ.

ມະຫາວິທະຍາໄລນານາຊາດກົງກອກເດຍແມ່ນເຊື່ອມໂຍງກັບບັນດາສາຂາຂອງມູນນິທິກົງກອອກເດຍໃນໄລຍະເວລາອັນສັ້ນຕັ້ງແຕ່ໄດ້ເລີ່ມເປີດຕົວ, ໄດ້ເຕີບໃຫຍ່ໃນຮູບແບບສະຖາບັນເພື່ອສະໜອງເຕັກນິກການສຶກສາທີ່ດີເລີດ, ໃນຂະນະດຽວກັນກໍຍັງຄົງຮັກສາຄວາມເຕີບໃຫຍ່ ແລະ ການພັດທະນາຂອງນັກຮຽນສະເໝີມາ. ທີ່ມະຫາວິທະຍາໄລນານາຊາດກົງກອກເດຍພວກເຮົາຕ້ອງເຮັດໃຫ້ນັກຮຽນພວກເຮົາສໍາເລັດການສຶກສາຢ່າງເອົາຈິງເອົາຈັງ; ພະນັກງານທີ່ປະສົບຜົນສໍາເລັດ, ນະວັດຕະກໍາທີ່ຂັບເຄື່ອນດ້ວຍຄຸນນະພາບ ແລະ ຄວາມຮັບຜິດຊອບນັ້ນແມ່ນເຫດຜົນຕົ້ນຕໍຂອງຄວາມສໍາເລັດຂອງບັນດານັກຮຽນວິຊາການສະເພາະດ້ານ ແລະ ກິດຈະກໍາຮ່ວມຫຼັກສູດ. ມະຫາວິທະຍາໄລມຸ່ງໝັ້ນທີ່ຈະສ້າງບັນດາບັນດິດໃນອານາຄົດທີ່ພຽບພ້ອມໄປດ້ວຍຄວາມຮູ້ ແລະ ຄວາມຊໍານິຊໍານານທີ່ແນ່ນອນເພື່ອໄປເຮັດວຽກ ແລະ ເອົາຕົວລອດໃນສະພາບແວດລ້ອມລະດັບໂລກທີ່ມີການແຂ່ງຂັນສູງ.

ມະຫາວິທະຍາໄລນານາຊາດກົງກອກເດຍ(CIU) ໄດ້ຮອງຮັບຈາກສະມາຄົມການສຶກສາສໍາລັບ 20ປີທີ່ຜ່ານມາດ້ວຍຜົນງານທີ່ດີເດັ່ນດ້ານການບໍລິການຫຼັກສູດການສຶກສາສາກົນ. CIU ປະກອບໄປດ້ວຍວິທະຍາໄລບະບົບ 4ປີ ເປັນຈໍານວນຫນ້ອຍ ແລະ ສະຖາບັນການສຶກສາຊັ້ນສູງເປັນຈໍານວນຫລາຍ. CIU ເປັນຜູ້ນໍາຫນ້າໃນການພັດທະນາຫຼັກສູດສໍາລັບບັນດາມະຫາວິທະຍາໄລທົ່ວໄປໃນອັງກິດ ແລະ ສະຫະລັດອາເມລິກາ ແລະ ຈະນໍາເອົາຫລັກສູດການສຶກສາດ້ານການແພດ ແລະ ລະບົບໂຮງໝໍເຂົ້າສູ່ ສ. ປ. ປ. ລາວ.

## OUR OBJECTIVE
## ຈຸດປະສົງຂອງພວກເຮົາ

ຍຸດທະສາດແຫ່ງຊາດຂອງລາວມີສອງພາກສ່ວນຕົ້ນຕໍນັ້ນຄືປັບປຸງບຸກຄະລາກອນດ້ານການດູແລສຸຂະພາບ ແລະ ສົ່ງເສີມການຝຶກອົບຮົມທາງການແພດທີ່ມີຄວາມຕ້ອງການສູງໃນອຸດສາຫະກໍາສຸຂະພາບນັບທັງພາກລັດ ແລະ ເອກະຊົນ. (Qian et al., 2016)

ລະບົບການຮັກສາສຸຂະພາບແມ່ນໜຶ່ງໃນຈໍານວນບຸລິມະສິດສູງສຸດສໍາລັບພະນັກງານການແພດ. ນອກຈາກຈຸດປະສົງທີ່ສໍາຄັນຕົ້ນຕໍຂອງກະຊວງສາທາລະນະສຸກ ແລະ ກະຊວງສຶກສາ(ພາກສຶກສາຊັ້ນສູງ) ແລ້ວຍັງມີ 3ສິ່ງທ້າທາຍ, ລະດັບຕົ້ນແມ່ນອຸດສາຫະກໍາການຮັກສາສຸຂະພາບ.

ສິ່ງທ້າທ້າຍທີ່ກ່າວຂ້າງເທິງມີຄື:
1. ອຸປະກອນ ແລະ ເຄື່ອງມືການແພດມາດຕະຖານສາກົນ
2. ສະມາຊິກຄະນະວິຊາມາດຕະຖານສາກົນ
3. ພະນັກງານການແພດ ແລະ ລູກຄ້າທີ່ກວ້າງຂວາງໃນການສ້າງຊຸມຊົນແພດ.

ໃນ 3ຂໍ້ ສິ່ງທ້າທາຍທີ່ກ່າວໃນຂ້າງເທິງນັ້ນ, CIU ຈະພະຍາຍາມອອກແຮງສຸດຂີດໃນການຮ່ວມມືກັບໂຮງໝໍ ສ. ເກົາຫຼີ ແລະ ຟິນລິບປິນເພື່ອຮັບປະກັນສະມາຊິກຄະນະວິຊາ ແລະ ສິ່ງອໍານວຍຄວາມສະດວກທີ່ຈໍາເປັນສໍາລັບບົດສະເໜີໂຄງການ (Project Proposal).

## THE PROJECT
## ໂຄງການ

ໂຄງການແມ່ນເພື່ອສ້າງຄະນະວິຊາວິທະຍາສາດສຸຂະພາບໃນນະຄອນຫລວງວຽງຈັນ, ສ. ປ. ປ. ລາວ ກໍຄືເປັນຜູ້ນໍາໜ້າໃນລະດັບສາກົນໃນການສຶກສາມືອາຊີບດ້ານສຸຂະພາບ, ດ້ານການຄົ້ນຄວ້າ ແລະ ການປິ່ນປົວ. ເບື້ອງຕົ້ນຂອງການສະເໜີແນວຄວາມຄິດນີ້ແມ່ນໂຮມເອົາຄະນະແພດສາດ, ພະຍາບານ ແລະ ການຢາ, ທັນຕະແພດ, ໂຮງຮຽນອະນາໄມແຂ້ວ ແລະ ການຟື້ນຟູການແພດເຂົ້າກັນ. ໃນ3ຂໍ້ສິ່ງທ້າທາຍກ່າວຂ້າງເທິງນັ້ນ, CIU ຈະພະຍາຍາມອອກແຮງສຸດຂີດຮ່ວມມືກັບໂຮງໝໍ ສ.ເກົາຫຼີ ແລະ ຟິນລິບປິນເພື່ອຮັບປະກັນໃຫ້ໄດ້ສະມາຊິກຄະນະວິຊາ ແລະ ສິ່ງອໍານວຍຄວາມສະດວກທີ່ຈໍາເປັນສໍາລັບບົດສະເໜີໃນໂຄງການນີ້.

## BUSINESS PLAN
## ແຜນທຸລະກິດ

ທຸລະກິດການຮັກສາສຸຂະພາບໄດ້ປ່ຽນແປງຢ່າງໄວວາໄປຕາມການປ່ຽນແປງຂອງເຕັກໂນໂລຊີ ແລະ ຄວາມຮັບຮູ້ທີ່ພົວພັນເຖິງຄວາມຕ້ອງການຂອງປະຊາຊົນ. ວິທີການເພື່ອສຸຂະພາບສາທາລະນະ ແມ່ນຈະເນັ້ນໃສ່ແບບພື້ນເມືອງ ແລະ ແບບທຳມະດາທີ່ມີຢູ່ແລ້ວເພື່ອພັດທະນາຜົນປະໂຫຍດລວມສຳລັບປະຊາຊົນ. ເນື່ອງຈາກວ່າມັນກ່ຽວຂ້ອງກັບຫຼາຍຂົງເຂດຂອງການປິ່ນປົວການແພດ, ຄວາມສັບສົນຂອງຮູບແບບພະຍາດ ແລະ ລະບົບການບໍລິການສົ່ງເສີມສຸຂະພາບ, ມັນຕ້ອງໃຊ້ເວລາອັນຍາວເພື່ອພັດທະນາສະຖາບັນການແພດດັ່ງກ່າວດ້ວຍການສຶກສາ ແລະ ພາກປະຕິບັດໃນເວລາດຽວກັນ, CIU ຈະກຳນົດຂອບເຂດລະຫວ່າງລະບົບການແພດທົ່ວໄປ ແລະ ລະບົບການແພດພິເສດ.

ລະບົບການແພດທົ່ວໄປພິຈາລະນາຫຼາຍຢ່າງທີ່ສຸດເຊັ່ນ: ຄົນເຈັບແຕ່ລະຄົນ ແລະ ຜົນໄດ້ຮັບດ້ານສາທາລະນະສຸກ, ພາກລັດຖະບານ, ສະຖາບັນວິຊາການ, ອຸດສາຫະກຳ, ບັນດາອົງການມືອາຊີບ ແລະ ຜູ້ມີສ່ວນຮ່ວມໃນຊຸມຊົນ. ລະບົບການແພດພິເສດສາມາດເນັ້ນໃສ່ການພັດທະນາຂົງເຂດສະເພາະສ່ວນນ້ອຍທີ່ແນ່ນອນຂອງການປິ່ນປົວທາງການແພດ.

***CIU ມີຄະນະວິຊາທີ່ມີປະສົບການມາແລ້ວຫຼາຍປີ ມີຫຼັກສູດ, ຄະນະວິຊາຕຽມພ້ອມໃນຂົງເຂດຂອງການແພດດ້ານຜິວໜັງ, ສັນຍາກຳຄວາມສວຍງາມ ແລະ ການແພດທາງເລືອກອື່ນໆ (ໄຄໂຣປລາສຕິກ, ການແພດແຜນຈີນພື້ນເມືອງ ແລະ ອື່ນໆ)***

## PROJECT PROCESS
## ການດຳເນີນໂຄງການ

01

ສ້າງຄູ່ຮ່ວມມືທຸລະກິດລະຫວ່າງ CIU ແລະມະຫາວິທະຍາໄລໃນລາວໂດຍການໃຫ້ CIU ເປັນເອກະລາດໃນການດຳເນີນທຸລະກິດທີ່ຖືກຕ້ອງຕາມກົດໝາຍ.

02

ການຮັບເອົາສະມາຊິກຄະນະວິຊາ ແລະ ຊ່ຽວຊານສະເໜີຫາລັດຖະບານເພື່ອອອກໃບອະນຸຍາດໃຫ້ບັນດາທ່ານໝໍ, ຊ່ຽວຊານ ແລະ ການແພດຕ່າງປະເທດ ເພື່ອມາເຮັດວຽກໃນໂຮງໝໍ ແລະໂຮງຮຽນຂອງພວກເຮົາ.

03

ໃບອະນຸຍາດ ແລະ ທະບຽນເພື່ອການເປີດໂຮງຮຽນ ແລະ ໂຮງໝໍຕ້ອງສະເໜີເອົາໃບອະນຸຍາດເພື່ອສ້າງ ແລະ ເປີດໂຮງໝໍໃນລາວ.

04

ການຕະຫຼາດ ແລະ ການອຸດໜູນ, ຜ່ານການຕະຫຼາດແມ່ນຄວາມຫວັງໜຶ່ງຂອງພວກເຮົາທີ່ຈະໄດ້ຮັບຄົນເຈັບ ແລະ ລູກຄ້າ.

05

ພວກເຮົາເອົາໃຈໃສ່ໃນການເຕີບໃຫຍ່ ແລະ ຄວາມຍືນຍົງໃນການຂະຫຍາຍທຸລະກິດໄປຫຼາຍພື້ນທີ່ ແລະ ອອກແບບລະບົບສິນຄ້າໃຫ້ເປັນທີ່ດຶງດູດແກ່ລູກຄ້າ.

ໃນຊຸມປີທີ່ຜ່ານມາອຸດສາຫະກຳທ່ອງທ່ຽວການແພດເວົ້າລວມແມ່ນໄດ້ເພີ່ມຂຶ້ນຢ່າງໄວວາ. ລວມມູນຄ່າການຕະຫຼາດເຖິງ 16,761ລ້ານ ໂດລາສະຫະລັດ ໃນ ປີ2018 ແລະ ຄາດວ່າຈະເພີ່ມຂຶ້ນເຖິງ 27,245ລ້ານ ໂດລາສະຫະລັດ ເຖິງ ປີ2024. ມູນຄ່າໃຊ້ຈ່າຍທາງການແພດລະດັບສູງໃນບັນດາປະເທດພັດທະນາແລ້ວ, ຄວາມອາດສາມາດຂອງເຕັກໂນໂລຢີທາງການແພດລ້ຳຍຸກ ແລະ ການປະຕິບັດຕາມມາດຕະຖານຄຸນນະພາບສາກົນແມ່ນນັບມື້ເພີ່ມຂຶ້ນ; ຄຸນນະພາບສູງຂອງການບໍລິການ, ປະກັນໄພສຸຂະພາບເຄື່ອນທີ່, ການໂຄສະນາ ແລະ ການຕະຫຼາດຂອງການທ່ອງທ່ຽວທາງການແພດມີຜົນສະທ້ອນອັນໃຫຍ່ຫຼວງຕໍ່ກັບອຸດສາຫະກຳ.




**Table 01: Market Growth estimate for medical tourism industry**

Table 01: ການຄາດຄະເນຄວາມເຕີບໃຫຍ່ດ້ານການຕະຫຼາດສຳລັບອຸດສາຫະກຳທ່ອງທ່ຽວທາງການແພດ

ດັ່ງທີ່ເຮົາເຂົ້າໃຈແລ້ວວ່າຄ່າໃຊ້ຈ່າຍໃນການປິ່ນປົວການແພດປະມານ 35-40% ຢູ່ໃນບັນດາປະເທດອາຊ້ຽນຈະຖືກກວ່າໃນບັນດາປະເທດ ສ. ອາເມລິກາ ແລະ ເອີຣົບ. ຕົວຢ່າງຄ່າໃຊ້ຈ່າຍໃນການທ່ອງທ່ຽວຖ້າຄິດໄລ່ຕໍ່ຫົວຄົນກໍເຫັນວ່າຖືກກວ່າ. ຢູ່ໃນບາງປະເທດເຊິ່ງຄ່າໃຊ້ຈ່າຍໃນການປິ່ນປົວແມ່ນບໍ່ໄດ້ຈ່າຍເພາະທັງໝົດ ແມ່ນລັດຖະບານເປັນຜູ້ຈ່າຍໃຫ້(ເຊັ່ນ: ການາດາ, ນິວຊີແລນ ແລະ ອັງກິດ), ການປິ່ນປົວທາງການແພດສ່ວນໃຫຍ່ພົວພັນເຖິງການລໍຖ້າທີ່ຍາວ, ນັ້ນເປັນອີກເຫດຜົນໜຶ່ງທີ່ປະຊາຊົນສ່ວນຫຼາຍຈະຊອກຫາການປົວປົວທີ່ໃຊ້ເວລາໄວກວ່າໃນປະເທດອື່ນ, ເພາະສະນັ້ນບັນດາປະເທດໄທ, ມາເລເຊຍ, ສິງກະໂປ ແລະ ຫວຽດນາມ ຈະໄດ້ຮັບຜົນປະໂຫຍດອັນໃຫຍ່ຫຼວງໃນການລັ່ງໄຫຼເຂົ້າມາຂອງນັກທ່ອງທ່ຽວເພື່ອການປິ່ນປົວທາງການແພດ. ໃນກໍລະນີດຽວກັນລາວກໍສາມາດບັນລຸໄດ້ໂດຍການປັບປຸງປ່ຽນແປງດ້ານອຸດສາຫະກຳການແພດ.

## SHOOL OF MEDICINE
## ໂຮງຮຽນການແພດ

ເພື່ອເຮັດໃຫ້ໂຮງໝໍປະຕິບັດພາລະບົດບາດໃນການບໍລິການຢ່າງມີລະບົບ, ມັນຮຽກຮ້ອງໃຫ້ມີການໝູນວຽນຂອງຄະນະວິຊາມືອາຊີບລະດັບສູງ, ການພັດທະນາຂອງການປະຕິບັດດ້ານການປິ່ນປົວການແພດ ແລະ ກຳລັງແຮງງານຂອງພະນັກງານໃນລະດັບຜູ້ຊ່ຽວຊານ(Sim, 2012). ເພື່ອສ້າງໂຮງໝໍສາກົນ ແລະ ໂຮງຮຽນການແພດສາກົນ, ການຝຶກອົບຮົມດ້ານພາສາອັງກິດແມ່ນຂໍກຸນແຈໃນການດຳເນີນການເພື່ອຈະກ້າວໄປຫາລະດັບສາກົນ. ບັນດາທ່ານໝໍ ແລະ ພະຍາບານຕ້ອງໄດ້ເຂົ້າໃຈພາສາອັງກິດໃນລະດັບທີ່ແນ່ນອນເວລາມີການພົວພັນກັບຄົນເຈັບຕ່າງປະເທດ. ໃນປະເທດໄທ, ໂຮງໝໍສ່ວນໃຫຍ່, ເພື່ອຮັບປະກັນການປິ່ນປົວດັ່ງກ່າວນີ້ແມ່ນທ່ານໝໍທັງໝົດຕ້ອງສາມາດແປເປັນພາສາອັງກິດໄດ້, ພວກເຂົາມີນັກແປພາສາຜູ້ທີ່ສາມາດແປໄດ້ເຖິງ 15ພາສາທີ່ແຕກຕ່າງກັນ(Wilson, 2013). ໃນເບື້ອງຕົ້ນ, ພວກເຮົາຈະນຳເອົາສະມາຊິກຄະນະວິຊາ ແລະ ບັນດານັກຊ່ຽວຊານທີ່ຈຳເປັນໃນອຸດສາຫະກຳນີ້ມາເລີ່ມຕົ້ນເຮັດທຸລະກິດ. ໃນໄລຍະທຳອິດຂອງແຜນທຸລະກິດແມ່ນຖ່າຍທອດຄວາມຮູ້ ແລະ ປະສົບການໃຫ້ໂຮງໝໍ ແລະ ໂຮງຮຽນການແພດ. ອີກເທື່ອໜຶ່ງ, ຖ້າໂຮງໝໍໄດ້ຖືກສ້າງຂຶ້ນ, ເຄື່ອຂ່າຍຂອງ CIU ຈະນຳເອົາຄົນເຈັບ ແລະ ລູກຄ້າຈາກ ສ.ເກົາຫຼີ ແລະ ຈາກບັນດາປະເທດອື່ນໆມາໃຊ້ບໍລິການປິ່ນປົວຄືກັນກັບລະບົບປິ່ນປົວຢູ່ ສ. ເກົາຫຼີ. ແນ່ນອນແລ້ວວ່າຄົນເຈັບຈະໄດ້ຈ່າຍຄ່າປິ່ນປົວຖືກກວ່າທີ່ເຂົາເຈົ້າຈະຈ່າຍຢູ່ ສ.ເກົາຫຼີ ແລະ ຢູ່ບັນດາປະເທດອື່ນໆ, ແຕ່ເຂົາເຈົ້າຈະຈ່າຍແພງກວ່າອັດຕາປິ່ນປົວທຳມະດາ. ສຳລັບຄົນເຈັບພາຍໃນທີ່ເຄີຍອອກໄປຮັບການປິ່ນປົວຢູ່ຕ່າງປະເທດມາກ່ອນນັ້ນ, ແຕ່ຖ້າມີໂຮງໝໍສາກົນແລ້ວເຂົາເຈົ້າຈະຕ້ອງເລືອກການປິ່ນປົວຢູ່ພາຍໃນປະເທດຕົນຄືລາວແທນທີ່ຈະເປັນປະເທດອື່ນ.

ສະເພາະການແພດ ແລະ ແພດຜ່າຕັດປລາດສຕິກພະຍາຍາມໃຫ້ກາຍມາເປັນສູນກາງທາງການແພດ ແລະ ການຜ່າຕັດຂອງອາຊີເພື່ອສາມາດຍາດແຍ່ງເອົາລູກຄ້າມາຈາກໄທ, ເຊິ່ງແຕ່ລະປີເຂົາສາມາດສ້າງລາຍຮັບໄດ້ເຖິງ 250ຕື້ບາດ(8,3ຕື້ ໂດລາສະຫະລັດ) ຕໍ່ປີ. ຄວາມຕ້ອງການໃນການສັນຍາກຳໄດ້ເພີ່ມຂຶ້ນຢ່າງໄວວາ ແລະ ກວ້າງຂວາງ, ສ່ວນຫຼາຍແລ້ວກໍແມ່ນຢູ່ໃນ ສ.ອາເມລິກາ, ເອີຣົບ ແລະ ອາຊີ. ໃນບັນດາປະເທດອາຊີ, ຈີນເປັນປະເທດທີ່ມີຈຳນວນປະຊາຊົນຫຼາຍທີ່ສຸດທີ່ກຳລັງພາກັນສັນຍາກຳ, ຕໍ່ມາແມ່ນຍີ່ປຸ່ນ, ສ.ເກົາຫຼີ ແລະ ໄຕ້ຫວັນ. ການເສີມດັງ ແລະ ເຮັດຕາສອງຊັ້ນແມ່ນມີຄວາມຕ້ອງການ ແລະ ນິຍົມສູງສຸດ(AsiaOne, 2013).

ແຜນທຸລະກິດນີ້ຈະກ່ຽວຂ້ອງເຖິງແຜງສັນຍາກຳຄວາມງາມໃຫ້ນັກທ່ອງທ່ຽວເຊິ່ງຈະລວມມີຄ່າປີ້ຍົນ, ຄ່າສັນຍະກຳຄວາມງາມ, ຫ້ອງພັກລະດັບດີເລີດ ແລະ ອື່ນໆ. ກ່ອນອື່ນໝົດ, ທາງໂຮງໝໍຈະເຊື້ອເຊີນເອົາສະມາຊິກຄະນະວິຊາ ແລະ ທ່ານໝໍມາຈາກ ສ. ເກົາຫຼີ, ໄທ, ຟີນລິບປິນ ແລະ ມາເລເຊຍ ມາຝຶກອົບຮົບໃຫ້ທ່ານໝໍ ແລະ ນັກຮຽນພາຍໃນລາວເພື່ອກຽມໃສ່ໃຫ້ແກ່ການຜ່າຕັດໃຫ້ດີທີ່ສຸດ. ໃນ ປີ 2009 ຈຳນວນນັກທ່ອງທ່ຽວປະມານ 60 000ຄົນ ເຊິ່ງເພີ່ມຂຶ້ນເຖິງ 296,889ຄົນ ໃນ ປີ 2015. ມີເຖິງ 28% ຈາກຈຳນວນດັ່ງກ່າວທີ່ເປັນນັກທ່ອງທ່ຽວເຂົ້າມາ ສ.ເກົາຫຼີ ເພື່ອມາສັນຍະກຳຄວາມງາມ, ສ.ເກົາຫຼີ ຈະເກັບເອົາປະມານ 3700 ໂດລາສະຫະລັດ ຕໍ່ຄົນ(Beautiquekorea, 2014)




Table 02: Number of Medical Tourists Visiting Korea

TABLE 02: ຈຳນວນນັກທ່ອງທ່ຽວເຂົ້າຢ້ຽມຢາມ ສ. ເກົາຫຼີ ເພື່ອການປິ່ວປົວການແພດ




Table 03: Cosmetic and Dermatology Tourists Visiting Korea

TABLE 03: ຈຳນວນນັກທ່ອງທ່ຽວເຂົ້າມາ ສ. ເກົາຫຼີ ເພື່ອສັນຍາກຳແລະບຳລຸງຜິວໜັງ

ໂຮງໝໍ ແລະ ໂຮງຮຽນການແພດຈະເປັນບ່ອນອີງໃນການສ້າງສະມາຄົມການທ່ອງທ່ຽວທາງການແພດສາກົນ(MTA) ເພື່ອສົ່ງເສີມໃຫ້ລາວກາຍເປັນສູນກາງການແພດ. ໂຮງໝໍແລະໂຮງຮຽນການແພດຈະເຮັດວຽກຮ່ວມກັບ MTA ສະໜອງສິ່ງອຳນວຍຄວາມສະດວກໃນການບໍລິການການແພດສຳລັບຄົນເຈັບຕ່າງປະເທດໃນຂະນະທີ່ເຂົາເຈົ້າອາໄສຢູ່ລາວ. ເພື່ອການອ້າງອີງ, ປະເທດໄທສ້າງລາຍຮັບໄດ້ 5ຕື້ ໂດລາສະຫະລັດ ຕໍ່ປີ ຈາກນັກທ່ອງທ່ຽວການແພດ, 1ຕື້ ໂດລາສະຫະລັດ ແມ່ນໄປປິ່ນປົວຢູ່ໂຮງໝໍເອກະຊົນ ແລະ ຄຣີນິກທີ່ສາມາດສະໜອງການປິ່ນປົວໃຫ້ແກ່ຄົນເຈັບຕ່າງປະເທດ(AsiaOne,2013). ຜົນການຄົ້ນຄວ້າໄດ້ໃຫ້ເຫັນວ່າ ການຜ່າຕັດສັນຍະກຳຄວາມງາມ ແລະ ຂັ້ນຕອນອຸດສາຫະກຳໃນອາຊີປາຊີຟິກແມ່ນຄາດວ່າຈະເຕີບໃຫຍ່ຂຶ້ນຢ່າງກ້າວກະໂດດໃນສະຫະສະວັດຕໍ່ໜ້າ, ຍ້ອນວ່າຄວາມເຕີບໃຫຍ່ການທ່ອງທ່ຽວການແພດ, ການປັບປຸງພື້ນຖານໂຄງລ່າງ, ການຮັກສາສຸຂະພາບ ແລະ ຄວາມອາດສາມາດໃນການບໍລິການດ້ວຍຄຸນນະພາບສູງ(Grandviewresearch.com,2017). ຄືດັ່ງໃນອັງກິດ,ອຸດສາຫະກຳສັນຍະກຳຄວາມງາມມີລາຍຮັບເຖິງ 4,5ຕື້ ໂດລາສະຫະລັດ(BBC Three,2017). ນັກຊ່ຽວຊານດ້ານການຜ່າຕັດເສີມຄວາມງາມແມ່ນຈະສືບຕໍ່ເພີ່ມຂຶ້ນຢ່າງກວ້າງຂວາງໃນໂລກ. 8,9% ໃນປີ 2020 (Malay Mail,2017). ຕະຫຼາດມີມູນຄ່າເຖິງ 8,5ຕື້ ໂດລາສະຫະລັດໃນ ປີ2016 ແລະ ຈະເພີ່ມຂຶ້ນເຖິງ 9,2ຕື້ ໂດລາສະຫະລັດໃນ ປີ2020 (Malay Mail, 2017). ນີ້ແມ່ນການອະທິບາຍວ່າຄວາມຕ້ອງການຂອງອຸດສາຫະກຳ ແລະ ການປະຕິບັດຕາມຄວາມຄິດນີ້ຈະເປັນທາງທີ່ດີຕໍ່ການສ້າງໂຮງຮຽນການແພດ ແລະ ໂຮງໝໍສັນຍະກຳ, ຖ້າລັດຖະບານສະໜັບສະໜູນຢ່າງເຕັມບົດບາດຊຸກຍູ້ໃຫ້ຫັນເອົາລາວເປັນສູນກາງການແພດ ແລະ ການຜ່າຕັດ, ລາຍຮັບຂອງປະເທດຈະໄດ້ເຖິງ 3ຕື້ ໂດລາສະຫະລັດ(50% ຂອງໄທ) ຕໍ່ປີໃນໄລຍະ 5ປີ ຕໍ່ໜ້າຄືກັນກັບໄທຈະມີລາຍຮັບກ່ຽວກັບຂະແໜງນີ້ 6,5ຕື້ ໂດລາສະຫະລັດ ຕໍ່ປີ.

***ມີຫຼາຍຄຣີນິກພາຍໃນປະເທດໄທກາຍເປັນສາຂາໂຮງໝໍ ສ.ເກົາຫຼີ ມີຊາວໜຸ່ມໄທຈຳນວນຫຼວງຫຼາຍທີ່ກຳລັງໄປຜ່າຕັດສັນຍາກຳຄວາມງາມຢູ່ ສ.ເກົາຫຼີ ຍ້ອນຜົນທ້ອນຈາກຄວາມນິຍົມວັດທະນະທຳຊາວໜຸ່ມ ສ.ເກົາຫຼີທີ່ໂດ່ງດັງ. ໃນອະນາຄົດຊາວໜຸ່ມໄທຜູ້ທີ່ຈະໄປຮັບການຜ່າຕັດຈາກ ສ.ເກົາຫຼີ ສາມາດເຂົ້າມາລາວເພື່ອຮັບການຜ່າຕັດ ແລະ ປິ່ນປົວຄືກັນກັບເຂົາເຈົ້າໄດ້ຮັບຢູ່ ສ.ເກົາຫຼີເພື່ອຫຼຸດຜ່ອນຄ່າໃຊ້ຈ່າຍ.***

ມັນຈະເປັນການລະເມີດຕໍ່ກົດໝາຍ,ຖ້າຫາກຄຣີນິກ ແລະ ໂຮງໝໍເອກະຊົນເຊີນບັນດາແພດຜ່າຕັດມາຈາກບັນດາປະເທດເຫຼົ່ານີ້ເຊັ່ນ: ສ.ເກົາຫຼີ ມາຜ່າຕັດໃຫ້ຄົນເຈັບຢູ່ພາຍໃນຕະຫຼອດ. ສະນັ້ນຊ່ຽວຊານມາຈາກ ສ.ເກົາຫຼີ ຈະຝຶກອົບຮົມໃຫ້ທ່ານໝໍພາຍໃນສາມາດຜ່າຕັດໄດ້ຄືກັນກັບຊ່ຽວຊານໃນເວລາອັນສັ້ນຈຶ່ງຈະເປັນການປະກອບສ່ວນໃຫ້ປະເທດລາວກາຍເປັນສູນກາງການແພດ ແລະ ການຜ່າຕັດຂອງອາຊີໃນຕໍ່ໜ້າ. ໂຮງຮຽນການແພດຢູ່ລາວຈະຕອບສະໜອງກັບຄວາມຕ້ອງການຂອງຄວາມຮຽກຮ້ອງຕ້ອງການຂອງໂຮງໝໍຂ້າງເທິງ ແລະ ຈະມີໜ້າທີ່ເປັນຖານສຳລັບການຄົ້ນຄວ້າ ແລະ ປິ່ນປົວສາກົນຂອງການແພດໃນອາຊີຕາເວັນອອກແລະຕາເວັນອອກສຽງໃຕ້. CIU ມີວັດຖຸຫຼັກສູດມາດຕະຖານສາກົນເຊິ່ງຈະອະນຸຍາດໃຫ້ນັກຮຽນຈາກຕ່າງປະເທດເຂົ້າມາຮຽນຂົງເຂດພິເສດຂອງການແພດແລະສຳເລັດໃບອະນຸຍາດຂອງພວກເຂົາຈາກບັນດາປະເທດຕ່າງໆ.ໃນຂະນະທີ່ໂຮງຮຽນການແພດລະບົບເກົ່າໃຊ້ເວລາຮຽນຫຼາຍປີໃນສະຖາບັນດຽວ ແລະ ຄ່າໃຊ້ຈ່າຍໃນການຮຽນສູງແບບບໍ່ມີປະສິດຕິພາບມ, ເພື່ອອຸດໜູນການສຶກສາ, CIU ຈະສະໜອງເຄືອຂ່າຍມະຫາວິທະຍາໄລນານາຊາດເຊິ່ງນັກສຶກສາສາມາດໄປຮຽນປີສຸດທ້າຍຂອງການສຶກສາເພື່ອສຳເລັດໃບອະນຸຍາດການແພດຂອງເຂົາເຈົ້າ. ໂຮງຮຽນການແພດລາວຈະຫຼຸດຄ່າໃຊ້ຈ່າຍ ແລະ ເວລາສຳລັບນັກສຶກສາທີ່ຈະກາຍເປັນນັກຊ່ຽວຊານການແພດທີ່ມີໃບອະນຸຍາດລະດັບສາກົນແລະລະດັບທີ່ບໍ່ພຽງແຕ່ມີສິດທິພິເສດສຳລັບການສຶກສາໃນຂະແໜງການປິ່ນປົວເທົ່ານັ້ນ.

ຍິ່ງໄປກວ່ານັ້ນ, ທ່ານໝໍຕ່າງປະເທດສາມາດປະຕິບັດການປິ່ນປົວໃນລາວສໍາລັບການປິ່ນປົວພິເສດຄືການຜ່າຕັດສັນຍະກໍາຄວາມງາມແລະພວກເຂົາສາມາດສ້າງລາຍຮັບດ້ານການເງິນພຽງພໍເພື່ອການຄົງຕົວຂອງການປະຕິບັດງານ. ໂຮງຮຽນການແພດສາກົນສາມາດຮັບເອົານັກສຶກສານາໆຊາດຈໍານວນຫຼວງຫຼາຍມາຈາກຫຼາຍປະເທດທີ່ຕ່າງກັນ. ໂຮງໝໍນີ້ຈະສະໜອງການບໍາລຸງດ້ານຜິວໜັງ, ການບໍາບັດດ້ວຍອາຫານ(ການແພດຕາເວັນອອກ ແລະ ການແພດຈີນພື້ນເມືອງ), ການປິ່ນປົວແບບໄຄໂຣປລາສຕິກຈຸດປະສົງເພື່ອຄວາມສວຍງາມ. ອີກເທື່ອໜຶ່ງ, ພວກເຮົາຈະສ້າງກອງທຶນເພື່ອຂົງເຂດດັ່ງກ່າວ ແລະ ຈະເພີ່ມຂະຫຍາຍການປິ່ນປົວອີງຕາມການເຕີບໃຫຍ່ຂອງໂຮງໝໍ.

## FINANCIAL REPORT
## ບົດລາຍງານດ້ານການເງິນ

ຕາຕະລາງລຸ່ມນີ້ສະແດງເຖິງການສັງລວມການປະເມີນຂໍ້ມູນດ້ານການເງິນໃນໄລຍະທໍາອິດຂອງໂຄງການ. ຂໍ້ມູນການເງິນລາຍລະອຽດແມ່ນຈະຕິດຂັດມາຕ່າງຫາກ.

(ຕາຕະລາງຢູ່ໜ້າຖັດໄປ)

| ປະເພດ | ເດືອນທີ1 | ເດືອນທີ2 | ເດືອນທີ3 | ເດືອນທີ4 | ເດືອນທີ5 | ເດືອນທີ6 | ເດືອນທີ7 | ເດືອນທີ8 | ເດືອນທີ9 | ເດືອນທີ10 | ເດືອນທີ11 | ເດືອນທີ12 | ລວມ |
|---|---|---|---|---|---|---|---|---|---|---|---|---|---|
| **ລາຍຮັບ** | **340.000** | **25.000** | **30.000** | **35.000** | **680.000** | **45.000** | **50.000** | **55.000** | **1.035.000** | **75.000** | **75.000** | **75.000** | **2.520.000** |
| ຄ່າໃຊ້ຈ່າຍໃນໂປຣແກມ | 75.100 | 39.833 | 41.800 | 43.767 | 117.500 | 47.700 | 49.667 | 51.633 | 165.800 | 59.500 | 59.500 | 59.500 | **811.300** |
| ຄ່າໃຊ້ຈ່າຍໃນການຂາຍ | 25.900 | 5.750 | 6.400 | 7.050 | 49.300 | 8.350 | 8.500 | 9.150 | 74.150 | 11.750 | 11.750 | 11.750 | **229.800** |
| ຄ່າໃຊ້ຈ່າຍຫຼັ້ນຫ້ຽນ | 41.020 | 40.300 | 40.620 | 40.940 | 43.340 | 41.580 | 41.900 | 42.220 | 46.620 | 43.500 | 43.500 | 43.500 | **509.040** |
| ຄ່າໃຊ້ຈ່າຍການບໍລິຫານ | 45.300 | 29.800 | 30.300 | 30.800 | 63.300 | 31.800 | 32.300 | 32.800 | 82.800 | 34.800 | 34.800 | 34.800 | **483.600** |
| **ຄ່າໃຊ້ຈ່າຍທັງໝົດ** | **187.320** | **115.683** | **119.120** | **122.557** | **273.440** | **129.430** | **132.367** | **135.803** | **369.370** | **149.550** | **149.550** | **149.550** | **2.033.740** |
| **ກໍາໄລຕົວຈິງ** | **152.680** | **-90.683** | **-89.120** | **-87.557** | **406.560** | **-84.430** | **-82.367** | **-80.803** | **665.630** | **-74.550** | **-74.550** | **-74.550** | **486.260** |

TABLE 04: ການປະເມີນລາຍເດືອນຂອງລາຍລະອຽດດ້ານການເງິນເປັນສະກຸນເງິນໂດລາສະຫະລັດ.




Table 05: Summary of the 1st year Financial Breakdown

TABLE 05: ຜົນສະຫຼຸບລາຍລະອຽດດ້ານການເງິນປີທໍາອິດ

# SUMMARY

# ສະຫຼຸບ

CIU ຈະນຳເອົາເຕັກໂນໂລຢີ ແລະ ການປະຕິບັດຕົວຈິງມາເປັນລະດັບຊາດເຊິ່ງຈະເຮັດໃຫ້ລາວເປັນອັນດັບໜຶ່ງທາງການແພດ ແລະ ອຸດສາຫະກຳທ່ອງທ່ຽວ. CIU ຈະສ້າງ ແລະ ເຮັດໃຫ້ອຸດສາຫະກຳອັນໃໝ່ດ້ວຍ, ບໍ່ພຽງແຕ່ການເປີດໂຮງໝໍເທົ່ານັ້ນ. ໂຮງໝໍຈະເປັນແບບຢ່າງທີ່ດີໃຫ້ແກ່ການເປີດກວ້າງສູ່ພາຍນອກເພາະພວກເຮົາຈະຝຶກອົບຮົມທ່ານໝໍໃຫ້ໄດ້ລະດັບຊ່ຽວຊານສາກົນ.